WWF
for a living planet®

**WWF-Laos**

House no. 39, Unit 05,
Ban Saylom,

P.O.Box. 7871
www.panda.org/laos

Tel. +856 21 216080
Fax.+856 21 251833

noy.promsouvanh@wwf.panda.org

| **Media Release** | **Immediate Release** |
|---|---|

# ສີພັນດອນກຳລັງຈະໄດ້ຮັບການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນ ສັດນ້ຳ ແບບຍືນຍົງ

**ວຽງຈັນ ວັນທີ 3 ຕຸລານີ້:** ກົມລ້ຽງສັດ ແລະ ການປະມົງ ພ້ອມດ້ວຍ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ຈຳປາສັກ ໄດ້ລົງນາມ ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບ ການນຳໃຊ້ ແລະ ຄຸ້ມຄອງປາ ແລະ ຊັບພະຍາກອນສັດນ້ຳ ແບບຍືນຍົງ ໃນເຂດສີພັນດອນ ຮ່ວມກັບ ກອງທຶນອະນຸລັກທຳມະຊາດໂລກ ປະຈຳ ສປປ ລາວ (WWF-Laos). ການລົງນາມໃນ ຄັ້ງນີ້ໄດ້ຈັດຂຶ້ນ ທີ່ ໂຮງແຮມ ປາກເຊ, ເມືອງ ປາກເຊ ແຂວງ ຈຳປາສັກ.

ໂຄງການດັ່ງກ່າວໄດ້ຮັບເງິນຊ່ວຍເຫລືອຈາກ ລັດຖະບານປະເທດ ເຢຍລະມັນ (BMZ) ແລະ ເຄືອຂ່າຍ ກອງທຶນອະນຸລັກທຳມະຊາດໂລກ (WWF Network) ໃນການຈັດຕັ້ງປະຕິບັດ ໂຄງການເປັນໄລຍະເວລາ 4 ປີ. ຕາງໜ້າລັດຖະບານລາວໃນການຮ່ວມຈັດຕັ້ງປະຕິບັດ ໂຄງການດັ່ງກ່າວແມ່ນ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ຈຳປາສັກ ເຊິ່ງພື້ນທີ່ໂຄງການດັ່ງກ່າວ ແມ່ນໄດ້ກຳນົດເອົາ ພື້ນທີ່ດິນບໍລິເວນນ້ຳ ທີ່ໃຫຍ່ທີ່ສຸດ ໃນພາກໃຕ້ຂອງ ສປປ ລາວ - ສີພັນດອນ ທີ່ຂຶ້ນກັບ ເມືອງ ມູນລະປະໂມກ ແລະ ເມືອງ ໂຂງ ແຂວງ ຈຳປາສັກ.

ໂຄງການດັ່ງກ່າວມີຈຸດປະສົງເພື່ອ ປັບປຸງຄຸນນະພາບຊີວິດການເປັນຢູ່ຂອງຊາວບ້ານ ໃນບໍລິເວນດັ່ງກ່າວ ເຊິ່ງພວກເຂົາເຈົ້າອາໄສຫາກິນຕາມທຳມະຊາດ ໂດຍສະເພາະການຫາປານອກຈາກຈະຫາມາ ເພື່ອເປັນອາຫານແລ້ວ ຍັງສາມາດ ສ້າງລາຍຮັບໃຫ້ກັບຄອບຄົວເຂົາເຈົ້າ ເຊັ່ນກັນ. ຊາວບ້ານທີ່ອາໄສຢູ່ບໍລິເວນດັ່ງກ່າວ ເປັນຜູ້ທີ່ໄດ້ຮັບຜົນປະໂຫຍດໂດຍກົງ ແລະ ຈະມີສ່ວນຮ່ວມນຳກິດຈະກຳຂອງໂຄງການ ເຊັ່ນ: ການຮຽນຮູ້ ແລະ ການຊົມໃຊ້ປາ ແລະ ຊັບພະຍາກອນສັດນ້ຳອື່ນໆ ແບບຍືນຍົງ.

“ພວກເຮົາຫວັງຢ່າງຍິ່ງວ່າ ແຜນງານບູລິມະສິດສຳລັບດິນບໍລິເວນນ້ຳທີ່ສຳຄັນໃນແມ່ນ້ຳຂອງ ທີ່ໄດ້ຮັບການພັດທະນາຂຶ້ນໃນໄລຍະຈັດຕັ້ງປະຕິບັດໂຄງການນີ້ ຈະໄດ້ຮັບການຮັບຮອງຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ນຳໄປຈັດຕັ້ງປະຕິບັດ. ຍ້ອນວ່າມັນບໍ່ເປັນພຽງແຜນງານທີ່ນຳ ໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ເທົ່ານັ້ນແຕ່ມັນຍັງການປົກປັກຮັກສາສັດທີ່ເປັນສັນຍາລັກຂອງແມ່ນ້ຳຂອງ ນັ້ນກໍຄື ປາຂ່າ, ເຊິ່ງປະຈຸບັນນີ້ຈຳນວນປະຊາກອນ ປາຂ່າເຫລືອ ພຽງ 6 ໂຕເທົ່ານັ້ນທີ່ຍັງອາໄສວັງປາຂ່າໃນເຂດສີພັນດອນ.”

ໃນປີ 2011 ປາຂ່າຈຳນວນດັ່ງກ່າວ ສາມາດດຶງດູດນັກທ່ອງເຂົ້າມາທ່ຽວໃນເຂດສີພັນດອນ ປະມານ 20,000 ຄົນ ເຊິ່ງມັນໄດ້ສ້າງລາຍຮັບໃຫ້ແກ່ຊາວບ້ານ ທີ່ອາໄສຢູ່ໃນບໍລິດເວນດັ່ງກ່າວ ໂດຍສະເພາະແມ່ນເຮືອນຳທ່ຽວ, ຮ້ານອາຫານ, ໂຮງແຮມ ແລະ ບ້ານພັກ ແຕ່ໜ້າເສຍດາຍປາຂ່າຈຳນວນດັ່ງກ່າວກຳລັງຕົກຢູ່ໃນສະພາບໃກ້ສູນພັນ ເນື່ອງຈາກວ່າ ການໃສ່ມອງຫາປາໃນວັງສະຫງວນປາຂ່າທີຈຳນວນຫລາຍເກີນໄປ. ຜ່ານມາ

WWF ໄດ້ບັນທຶກວ່າຕັ້ງແຕ່ ເດືອນ ມັງກອນ ຫາເດືອນ ເມສາ 2012 ມີຊາວບ້ານໃສ່ມອງຫາປາໃນບໍລິເວນດັ່ງກ່າວປະມານ 200 ຕອນ.

ທ່ານ ດຣ. ບຸນຂວາງ ຄໍາບຸນເຮືອງ, ຫົວໜ້າກົມລ້ຽງສັດ ແລະ ການປະມົງ ໄດ້ໃຫ້ສໍາພາດ ວ່າ "ໂຄງການນີ້ຈະຊ່ວຍປັບປຸງ ລະບົບການຕິດຕາມກວດກາຕ່າງໆ ທີ່ກ່ຽວພັນກັບແມ່ນໍ້າ ແລະ ການບັງຄັບໃຊ້ກົດໝາຍວ່າດ້ວຍການປະມົງເພື່ອຮັບປະກັນຄວາມຍືນຍົງໃນເຂດສີພັນດອນ"

ໂຄງການນີ້ຈະຊຸກຍູ້ສົ່ງເສີມອາຊີບພາຍໃນທ້ອງຖິ່ນໃຫ້ມີຄວາມຫລາກຫລາຍ ແລະ ສ້າງຈິດສໍານຶກໃນການອະນຸລັກສິ່ງແວດລ້ອມ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນເຂດບ້ານເປົ້າໝາຍຂອງໂຄງການ ແລະ ເພື່ອໃຫ້ມີຄວາມສາມາດໃນການປັບຕົວເຂົ້າກັບສະພາບເງື່ອນໄຂ ທາງດ້ານສິ່ງແວດລ້ອມ ທີ່ມີການປ່ຽນແປງຢ່າງຕໍ່ເນື່ອງ. ນອກຈາກນີ້ ທາງໂຄງການຈະສະໜັບສະໜູນຊຸມຊົນໃນການສ້າງຕັ້ງວັງສະຫງວນ, ກົດລະບຽບໃນການຄຸ້ມຄອງວັງສະຫງວນ ເຊິ່ງ ມັນຈະຊ່ວຍໃຫ້ປາ ແລະ ສັດນໍ້າອື່ນໆ ສາມາດຂະຫຍາຍພັນຕາທໍາມະຊາດໄດ້ ໂດຍສະເພາະ ຈໍານວນປະຊາກອນປາຂ່າ.

ໂຄງການດັ່ງກ່າວ ຍັງສາມາດສ້າງລາຍຮັບໃຫ້ແກ່ຊາວບ້ານໃນພື້ນທີ່ໂຄງການຢ່າງໜ້ອຍຈໍານວນ 700 ຄົວເຮືອນ ທີ່ຮ່ວມຈັດຕັ້ງປະຕິບັດກິດຈະກໍາຂອງໂຄງການ.

**ສໍາລັບບັນນາທິການ**

**ຜູ້ເຊັນບົດບັນທຶກຄວາມເຂົ້າໃຈ**
**ຕາງໜ້າກອງທຶນອະນຸລັກທໍາມະຊາດໂລກ ປະຈໍາ ສປປ ລາວ**
ທ່ານສົມພອນ ບົວສະຫວັນ
ຫົວໜ້າອົງການ
WWF-Laos

**ຕາງໜ້າກົມລ້ຽງສັດ ແລະ ການປະມົງ**
ທ່ານ ດຣ. ບຸນຂວາງ ຄໍາບຸນເຮືອງ
ຫົວໜ້າກົມ
ກົມລ້ຽງສັດ ແລະ ການປະມົງ

**About WWF**
WWF has a long history of engagement in the region, the organization helped establish conservation programmes in Thailand in the early 1980's and has been active in Cambodia, Laos and Vietnam since 1990.

**WWF-Laos:** www.panda.org/laos

**More information, please contact:**

MEDIA CONTACT:

**Noy Promsouvanh**
Communications Manager
WWF-Laos

PO.Box 7871
Vientiane, Lao PDR
T. +856 21 216 080
M.+856 20 222 16 929
E. noy.promsouvanh@wwf.panda.org

GOVERNMENT CONTACT:

**MR. BOUNTHONG SAPHAKDY**
Head of Fisheries Division
Department of Livestock and Fisheries

M. +856 20 556 18 950
E. saphakdy@yahoo.com

TECHNICAL CONTACT:

**Dr Victor Cowling**
Landscape Manager
WWF-Laos

PO.Box 7871
Vientiane, Lao PDR
T. +856 21 216 080

E. somnhoth.phongsavath@wwf.panda.org